ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

# ບົດລາຍງານປະຈຳປີ

# ANNUAL REPORT 2015

# ບົດລາຍງານປະຈຳປີ 2015

# ຄຳນຳ

ປີ 2015 ແມ່ນປີສຸດທ້າຍຂອງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ແລະ ກໍ່ແມ່ນປີທີ 5 ຂອງການສ້າງຕັ້ງຕະຫຼາດທຶນ ຢູ່ ສປປ ລາວ. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ສືບຕໍ່ຄຸ້ມຄອງຕະຫຼາດທຶນໃຫ້ການເຄື່ອນໄຫວຢ່າງໂປ່ງໃສ ແລະ ຍຸຕິທຳ, ຍົກສູງບົດບາດຂອງຕະຫຼາດທຶນໃນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຢ່າງຕໍ່ເນື່ອງ.

ໃນໜຶ່ງປີທີ່ຜ່ານມາ ສະພາບເສດຖະກິດຂອງໂລກຂະຫຍາຍຕົວໃນຈັງຫວະຊ້າ ໃນລະດັບ 3,1% ເນື່ອງຈາກວ່າເສດຖະກິດຂອງປະເທດຕະຫຼາດເກີດໃໝ່ ແລະ ເສດຖະກິດປະເທດກຳລັງພັດທະນາ ຂະຫຍາຍຕົວຊ້າລົງ ເປັນຕົ້ນແມ່ນເສດຖະກິດຂອງ ສປ ຈີນ ສົມທົບກັບຄວາມຜັນຜວນຂອງລາຄານໍ້າມັນ, ລາຄາຄຳ, ລາຄາສະບຽງອາຫານ, ຮຸ້ນ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນ. ສະພາບການດັ່ງກ່າວນີ້ໄດ້ສ້າງກາລະໂອກາດ ແລະ ສິ່ງທ້າທາຍພໍສົມຄວນຕໍ່ການເຄື່ອນໄຫວ ແລະ ການພັດທະນາຂອງຕະຫຼາດທຶນໂລກ. ສຳລັບຢູ່ ສປປ ລາວ ຍ້ອນມີການຊີ້ນຳ-ນຳພາຢ່າງແທດເຖິງຂອງຄະນະ ຄຄຊ ເຮັດໃຫ້ພວກເຮົາສາມາດຜ່ານຜ່າຄວາມຫຍຸ້ງຍາກທີ່ໄດ້ຮັບຜົນກະທົບຈາກສະພາບເສດຖະກິດໂລກ ແລະ ສາມາດຍາດໄດ້ຜົນສຳເລັດໃນຫຼາຍວຽກງານ ເຊັ່ນ: ສຳເລັດການສ້າງ ແລະ ປັບປຸງນິຕິກຳຈຳນວນໜຶ່ງ, ໄດ້ອະນຸຍາດໃຫ້ 1 ບໍລິສັດ ອອກຈຳໜ່າຍຮຸ້ນຄັ້ງທຳອິດ ເພື່ອລະດົມທຶນຈາກມວນຊົນ, ຮັບຮອງເອົາບໍລິສັດກວດສອບໃນວຽກງານຫຼັກຊັບເພີ່ມ 1 ບໍລິສັດ, ອະນຸຍາດໃຫ້ຕະຫຼາດຫຼັກຊັບລາວ ລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ຮ່ວມກັບ ຕະຫຼາດຫຼັກຊັບກຳປູເຈຍ ແລະ ຕະຫຼາດຫຼັກຊັບແຫ່ງປະເທດໄທ, ສຳເລັດການເປັນເຈົ້າພາບຈັດກອງປະຊຸມການຮ່ວມມືດ້ານຕະຫຼາດທຶນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ 5 ປະເທດເຂດອ່າງແມ່ນໍ້າຂອງ (MCMC) ຄັ້ງທີ V. ພ້ອມນັ້ນ ຍັງໄດ້ສຳເລັດການຈັດຕັ້ງເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນໃຫ້ແກ່ມວນຊົນ ທັງພາຍໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງຈຳນວນຫຼາຍຄັ້ງ.

ສຳລັບປີ 2016 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະສືບຕໍ່ສ້າງ ແລະ ປັບປຸງ ບັນດານິຕິກຳ ເພື່ອຮອງຮັບການພັດທະນາຂອງຕະຫຼາດທຶນ, ຊຸກຍູ້ການບໍລິການຈັດລຳດັບຄວາມໜ້າເຊື່ອຖື ແລະ ການປະເມີນມູນຄ່າຊັບສິນເພື່ອອຳນວຍຄວາມສະດວກໃຫ້ແກ່ການກະກຽມອອກຈຳໜ່າຍຫຼັກຊັບຂອງບັນດາບໍລິສັດ, ເອົາໃຈໃສ່ຄຸ້ມຄອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນໃຫ້ເຄື່ອນໄຫວພາຍໃຕ້ລະບຽບກົດໝາຍ ແນໃສ່ຮັບປະກັນສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນ, ພ້ອມນັ້ນ ຍັງໄດ້ສືບຕໍ່ຊຸກຍູ້ບັນດາບໍລິສັດທີ່ມີທ່າແຮງບົ່ມຊ້ອນໃນການລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ຊຸກຍູ້ໃຫ້ຕະຫຼາດຫຼັກຊັບລາວເປີດບໍລິການຊື້-ຂາຍຮຸ້ນແບບຈຳນວນຫຼາຍ (Block Trading), ສືບຕໍ່ຈັດກອງປະຊຸມສຳມະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ມວນຊົນຢ່າງທົ່ວເຖິງ ແລະ ໃຫ້ສຳເລັດລາຍການໂທລະພາບ “ເສັ້ນທາງສູ່ຕະຫຼາດທຶນລາວ” ໃຫ້ສາມາດອອກອາກາດເຜີຍແຜ່ໃຫ້ສັງຄົມໄດ້ຮັບຊົມ. ພວກເຮົາຍັງຈະສືບຕໍ່ຈັດຕັ້ງປະຕິບັດແຜນການຮ່ວມມືກັບ ຄຄຊ ບັນດາປະເທດໃນພາກພື້ນ ແລະອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານວິຊາການ, ພ້ອມທັງ ກະກຽມເປັນເຈົ້າພາບຈັດກອງປະຊຸມລະດັບສາກົນກ່ຽວກັບໂຄງການລິເລີ່ມໃນການຄຸ້ມຄອງບໍລິຫານສຳລັບຂົງເຂດອາຊີຕາເວັນອອກສຽງໃຕ້ ຄັ້ງທີ III ຢູ່ ສປປ ລາວ ( Southeast Asia Corporate Governance Initiative) ໂດຍຮ່ວມມືກັບອົງການ

ພັດທະນາ ແລະ ການຮ່ວມມືດ້ານເສດຖະກິດ Organization for Economic Co-operation and Development (OECD).

ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ສາຍສະໝອນ ຈັນທະຈັກ

# ສາລະບານ


I. ຄວາມຮູ້ພື້ນຖານກ່ຽວກັບຕະຫຼາດທຶນ ..... 1

1. ຕະຫຼາດທຶນ ..... 1
2. ຜະລິດຕະພັນໃນຕະຫຼາດທຶນ ..... 1
3. ໂຄງປະກອບຂອງຕະຫຼາດທຶນ ສປປ ລາວ ..... 1

3.1 ຄະນະກຳມະການຄຸ້ມຄອງຫຼັກຊັບ ..... 1
3.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ..... 2
3.3 ຕະຫຼາດຫຼັກຊັບ ..... 3
3.4 ບໍລິສັດຈົດທະບຽນ ..... 3
3.5 ບໍລິສັດຫຼັກຊັບ ..... 4
3.6 ບໍລິສັດກວດສອບ ..... 4

II. ສະພາບການພັດທະນາຕະຫຼາດທຶນ ໃນປີ 2015 ..... 4

1. ສະພາບລວມຂອງຕະຫຼາດທຶນ ຢູ່ ຕ່າງປະເທດ ..... 4
2. ສະພາບລວມຂອງຕະຫຼາດທຶນ ຢູ່ ສປປ ລາວ ..... 5

2.1 ການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ ..... 5
2.2 ການເຄື່ອນໄຫວຂອງບໍລິສັດຈົດທະບຽນ ..... 8
2.3 ການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ..... 9
2.3 ສະຖາບັນສື່ກາງດ້ານຫຼັກຊັບ ..... 13
2.4 ການສ້າງ ແລະ ປັບປຸງນິຕິກຳ ..... 13
2.5 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ..... 14
2.6 ການຮ່ວມມືສາກົນ ..... 14

III. ທິດທາງແຜນການປີ 2016 ..... 15

ແຜນວາດ 1: ໂຄງຮ່າງການຈັດຕັ້ງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ .................................................. 2
ແຜນວາດ 2: ໂຄງຮ່າງການຈັດຕັ້ງຂອງ ສຄຄຊ ........................................................................... 3
ແຜນວາດ 3: ມູນຄ່າການລະດົມທຶນໃນຕະຫຼາດທຶນ ສປປ ລາວ ຕັ້ງແຕ່ປີ 2011-2015 .................................... 7
ແຜນວາດ 4: ດັດຊະນີຕະຫຼາດຫຼັກຊັບລາວ 2011-2015 .................................................................. 9
ແຜນວາດ 5: ມູນຄ່າການຊື້-ຂາຍ ແລະ ປະລິມານ ......................................................................... 9
ແຜນວາດ 6: ມູນຄ່າຕະຫຼາດ ແຕ່ປີ 2011 – 2015 ........................................................................ 10
ແຜນວາດ 7: ການເຄື່ອນໄຫວລາຄາຂອງຮຸ້ນ **ທຄຕລ**, **ຜ-ຟຟລ**, **ລວມຊ** , **ປທລ** ແລະ **ສ.ອ.ນ** ............................11
ແຜນວາດ 8: ຈຳນວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປະຈຳປີ2015 ...................... 12
ແຜນວາດ 9: ເປີເຊັນມູນຄ່າການຊື້-ຂາຍຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປີ 2012-2015 ...................... 12

---

ຕາຕະລາງ 1: ສະຫຼຸບຜົນການລະດົມທຶນ ໂດຍຜ່ານ IPO ຂອງ ສ.ອ.ນ (ເດືອນ ພະຈິກ 2015) ............................ 6
ຕາຕະລາງ 2: ໂຄງສ້າງຜູ້ຖືຮຸ້ນພາຍຫຼັງອອກຈຳໜ່າຍຮຸ້ນເພີ່ມທຶນ ຂອງ ຜ-ຟຟລ (ເດືອນ ກັນຍາ 2015) .................. 7
ຕາຕະລາງ 3: ການຈ່າຍເງິນປັນຜົນຂອງ 5 ບໍລິສັດຈົດທະບຽນໃນ ຕລຊລ ແຕ່ປີ 2011 ຫາ 2015 .......................... 8
ເອກະສານຊ້ອນທ້າຍ 1 : ບໍລິສັດຫຼັກຊັບໃນ ສປປ ລາວ…….......................................................a
ເອກະສານຊ້ອນທ້າຍ 2: ນິຕິກຳທັງໝົດຂອງ ສຄຄຊ (ຮອດປີ 2015): ..................................................... B
ເອກະສານຊ້ອນທ້າຍ 3: ນິຕິກຳທັງໝົດຂອງ ຕລຊລ (ຮອດ ປີ 2015):..................................................... D

## I. ຄວາມຮູ້ພື້ນຖານກ່ຽວກັບຕະຫຼາດທຶນ

### 1. ຕະຫຼາດທຶນ

ຕະຫຼາດທຶນ ແມ່ນຕະຫຼາດລະດົມທຶນໄລຍະຍາວ ຫຼື ເວົ້າອີກຢ່າງໜຶ່ງວ່າ ຕະຫຼາດທຶນ ແມ່ນຂະບວນການຈັດສັນທຶນໄລຍະຍາວແບບທາງກົງ ລະຫວ່າງ ພາກສ່ວນທີ່ຕ້ອງການນຳໃຊ້ທຶນ ເຊັ່ນ: ລັດຖະບານ ຫຼື ບັນດາຫົວໜ່ວຍວິສາຫະກິດ ແລະ ພາກສ່ວນທີ່ມີທຶນສະສົມ ເຊັ່ນ: ຜູ້ລົງທຶນປະເພດບຸກຄົນ ຫຼື ປະເພດສະຖາບັນ. ການລະດົມຜ່ານຕະຫຼາດທຶນ ແມ່ນຈັດຕັ້ງປະຕິບັດດ້ວຍການອອກຈຳໜ່າຍຫຼັກຊັບ ເຊັ່ນ: ຮຸ້ນ, ພັນທະບັດ, ຮຸ້ນກູ້ ແລະ ຫຼັກຊັບອື່ນ ເພື່ອຈຸດປະສົງນຳໃຊ້ທຶນທີ່ລະດົມມານັ້ນ ເຂົ້າໃນການລົງທຶນໄລຍະຍາວ ເຊັ່ນ: ການລົງທຶນໃສ່ການກໍ່ສ້າງໂຮງງານ, ຂະຫຍາຍຖານການຜະລິດ ແລະ ບໍລິການ ຫຼື ການກໍ່ສ້າງພື້ນຖານໂຄງລ່າງ.

### 2. ຜະລິດຕະພັນໃນຕະຫຼາດທຶນ

ອີງຕາມລະດັບການພັດທະນາຂອງຕະຫຼາດທຶນໃນແຕ່ລະປະເທດ, ຜະລິດຕະພັນທີ່ມີໃນຕະຫຼາດທຶນກໍ່ຈະມີຜະລິດຕະພັນທີ່ແຕກຕ່າງກັນ. ໂດຍທົ່ວໄປແລ້ວ ຜະລິດຕະພັນທີ່ນຳມາຊື້-ຂາຍໃນຕະຫຼາດທຶນ ປະກອບມີ: ຮຸ້ນສາມັນ (Common Stock), ຮຸ້ນບູລິມະສິດ (Preferred Stock), ພັນທະບັດລັດຖະບານ (Government Bond), ຮຸ້ນກູ້ (Corporate Bond), ສັນຍາຊື້-ຂາຍລ່ວງໜ້າ (Futures), ສັນຍາສິດ (Options), ໃບສະແດງສິດໃນການຊື້ຫຼັກຊັບ (Warrant) ແລະ ຜະລິດຕະພັນອື່ນໆ. ປະຈຸບັນ ຜະລິດຕະພັນທີ່ທຳການຊື້-ຂາຍໃນຕະຫຼາດຫຼັກຊັບລາວ (ຕລຊລ) ມີພຽງແຕ່ ຮຸ້ນສາມັນ ເທົ່ານັ້ນ.

### 3. ໂຄງປະກອບຂອງຕະຫຼາດທຶນ ສປປ ລາວ

ໂຄງປະກອບຂອງຕະຫຼາດທຶນ ສປປ ລາວ ປະກອບດ້ວຍພາກສ່ວນຕ່າງໆ ດັ່ງລຸ່ມນີ້:

- **ຄະນະກຳມະການຄຸ້ມຄອງຫຼັກຊັບ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີຊື່ຫຍໍ້ວ່າ: “ຄຄຊ” ຖືກສ້າງຕັ້ງຂຶ້ນໃນເດືອນ ພຶດສະພາ 2009, ຄຄຊ ແມ່ນການຈັດຕັ້ງໜຶ່ງຂອງລັດຖະບານ ມີສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີຊື່ຫຍໍ້ວ່າ: “ສຄຄຊ” ຊຶ່ງຖືກສ້າງຕັ້ງຂຶ້ນໃນເດືອນ ກໍລະກົດ 2009 ເປັນກົງຈັກຊ່ວຍວຽກ.

ຄຄຊ ເປັນອົງການຄຸ້ມຄອງວຽກງານຫຼັກຊັບ ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນການຄຸ້ມຄອງມະຫາພາກທາງດ້ານວຽກງານຫຼັກຊັບຢ່າງລວມສູນໃນຂອບເຂດທົ່ວປະເທດ ເປັນຕົ້ນແມ່ນ ການຄຸ້ມຄອງ, ຕິດຕາມ ແລະ ກວດກາວຽກງານຫຼັກຊັບ ໃຫ້ມີປະສິດທິພາບ, ແນໃສ່ເຮັດໃຫ້ການລະດົມທຶນ ແລະ ການພັດທະນາຕະຫຼາດຫຼັກຊັບ ໃຫ້ມີການເຄື່ອນໄຫວຢ່າງຕໍ່ເນື່ອງ ແລະ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ. ຄຄຊປະກອບມີ 13 ທ່ານ ປະທານ 1 ທ່ານ, ຮອງປະທານ 2 ທ່ານ, ກຳມະການ 9 ທ່ານ ແລະ ເລຂາ ຄຄຊ 1 ທ່ານ (ແຜນວາດ 1).




**ແຜນວາດ 1: ໂຄງຮ່າງການຈັດຕັ້ງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ**

- **ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຄຄຊ ມີພາລະບົດບາດເປັນກົງຈັກຊ່ວຍວຽກໃຫ້ແກ່ ຄຄຊ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນແຕ່ລະໄລຍະ.

ສຄຄຊ ມີສິດ ແລະ ໜ້າທີ່ຕົ້ນຕໍ ຄື: ຄົ້ນຄວ້າ, ຮ່າງ ແລະ ປັບປຸງ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບກ່ຽວກັບວຽກງານຫຼັກຊັບ ເພື່ອສະເໜີຕໍ່ ຄຄຊ ພິຈາລະນາ, ພ້ອມທັງ ດຳເນີນການແກ້ໄຂຂໍ້ຂັດແຍ່ງ ແລະ ດຳເນີນການສືບສວນ-ສອບສວນຄະດີກ່ຽວກັບວຽກງານຫຼັກຊັບ; ຄົ້ນຄວ້າ ພິຈາລະນາການຮ້ອງຂໍອອກຈຳໜ່າຍຫຼັກຊັບ ພ້ອມທັງຕິດຕາມກວດກາການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ; ຕິດຕາມກວດກາການເຄື່ອນໄຫວຂອງຕະຫຼາດຫຼັກຊັບ; ຄົ້ນຄວ້າຄຳຮ້ອງຂໍສ້າງຕັ້ງສະຖາບັນສື່ກາງດ້ານຫຼັກຊັບ ເພື່ອນຳສະເໜີຕໍ່ ຄຄຊ ພິຈາລະນາຮັບຮອງ ພ້ອມທັງຕິດຕາມກວດກາການເຄື່ອນໄຫວຂອງສະຖາບັນດັ່ງກ່າວ ແລະ ຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ; ຈັດຕັ້ງຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບໃຫ້ແກ່ມວນຊົນ ຕາມທິດຊີ້ນຳຂອງ ຄຄຊ; ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານຫຼັກຊັບ ຕາມການມອບໝາຍຂອງ ຄຄຊ.

ສຄຄຊ ປະກອບດ້ວຍ 6 ພະແນກ ຄື: ພະແນກຈັດຕັ້ງ ແລະ ບໍລິຫານ, ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ, ພະແນກນິຕິກຳ, ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ແລະ ພະແນກຄຸ້ມຄອງຕະຫຼາດຫຼັກຊັບ (ແຜນວາດ 2). ມາຮອດທ້າຍປີ 2015 ສຄຄຊ ປະກອບມີພະນັກງານທັງໝົດ 48 ຄົນ (ຍິງ 21 ຄົນ), ປະກອບດ້ວຍຄະນະ ສຄຄຊ 3 ຄົນ (ຍິງ 2 ຄົນ), ຄະນະພະແນກ 14 ຄົນ (ຍິງ 6 ຄົນ),

ພະນັກງານວິຊາການ 31 ຄົນ (ຍິງ 14 ຄົນ) ແລະ ມີລະດັບການສຶກສາ ຄື: ປະລິນຍາເອກ 1 ຄົນ, ປະລິນຍາໂທ 22 ຄົນ (ຍິງ 12 ຄົນ), ປະລິນຍາຕີ 24 ຄົນ (ຍິງ 9 ຄົນ)ແລະ ຊັ້ນກາງ 1 ຄົນ.

**ແຜນວາດ 2: ໂຄງຮ່າງການຈັດຕັ້ງຂອງ ສຄຄຊ**




- **ຕະຫຼາດຫຼັກຊັບ**

ໃນ ສປປ ລາວ ຕະຫຼາດຫຼັກຊັບ ເຮັດໜ້າທີ່ເປັນສູນກາງໃຫ້ບໍລິການຊື້-ຂາຍຫຼັກຊັບ, ສະສາງ-ຊຳລະ ແລະ ຮັບຝາກຫຼັກຊັບ ຂອງບໍລິສັດທີ່ນຳເອົາຫຼັກຊັບຂອງຕົນເຂົ້າມາຈົດທະບຽນໃນຕະຫຼາດຫຼັກຊັບ.

ປະຈຸບັນຢູ່ ສປປ ລາວ ມີ ຕະຫຼາດຫຼັກຊັບ 1 ແຫ່ງ ຄື: ຕລຊລ ຖືກສ້າງຕັ້ງຂຶ້ນໃນຮູບແບບບໍລິສັດຈຳກັດ, ໂດຍແມ່ນການຮ່ວມທຶນລະຫວ່າງ ທະນາຄານ ແຫ່ງ ສປປ ລາວ ຖືຮຸ້ນ 51% ແລະ ຕະຫຼາດຫຼັກຊັບ ສ.ເກົາຫຼີ ຖືຮຸ້ນ 49%, ຖືກສ້າງຕັ້ງຂຶ້ນ ເມື່ອວັນທີ 10 ຕຸລາ 2010 ແລະ ເປີດໃຫ້ບໍລິການຊື້-ຂາຍຮຸ້ນຄັ້ງທຳອິດ ໃນວັນທີ 11 ມັງກອນ 2011.

- **ບໍລິສັດຈົດທະບຽນ**

ບໍລິສັດຈົດທະບຽນ ໝາຍເຖິງບໍລິສັດໃດໜຶ່ງທີ່ໄດ້ຜ່ານການຮັບຮອງຈາກອົງການຄຸ້ມຄອງວຽກງານຫຼັກຊັບ ໃຫ້ລະດົມທຶນຜ່ານຕະຫຼາດທຶນ ໂດຍການນຳເອົາຫຼັກຊັບຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ແລະ ນຳຫຼັກຊັບຂອງຕົນເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ.

ປະຈຸບັນໃນ ສປປ ລາວ ມີບໍລິສັດຈົດທະບຽນ 5 ບໍລິສັດ ຄື: ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ), ບໍລິສັດ ລາວເວີນ ມະຫາຊົນ (ລວມຊ), ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (ປທລ) ແລະ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ).

- **ບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ແມ່ນ ສະຖາບັນສື່ກາງດ້ານຫຼັກຊັບປະເພດໜຶ່ງ ທີ່ເຄື່ອນໄຫວທຸລະກິດຫຼັກຊັບຕາມປະເພດທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານຫຼັກຊັບ. ໃນ ສປປ ລາວ ບໍລິສັດຫຼັກຊັບ ສາມາດເຮັດໜ້າທີ່ໄດ້ 3 ປະເພດ ຄື: ເປັນຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ, ເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ເປັນທີ່ປຶກສາດ້ານການເງິນ.

ໃນປະຈຸບັນ ຢູ່ ສປປ ລາວ ມີບໍລິສັດຫຼັກຊັບ 4 ບໍລິສັດ, ຊຶ່ງໃນນັ້ນມີ 3 ບໍລິສັດ ເຮັດໜ້າທີ່ໄດ້ທັງ 3 ປະເພດ ຄື: ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ, ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ. ສ່ວນອີກ 1 ບໍລິສັດ ຄື: ບໍລິສັດຫຼັກຊັບ ເອພີເອັມ ລາວ ຈຳກັດ ເຮັດໜ້າທີ່ເປັນພຽງທີ່ປຶກສາດ້ານການເງິນ.

- **ບໍລິສັດກວດສອບ**

ບໍລິສັດກວດສອບ ແມ່ນໜຶ່ງໃນສະຖາບັນສື່ກາງດ້ານຫຼັກຊັບປະເພດໜຶ່ງ ຊຶ່ງບໍລິສັດກວດສອບໃນ ສປປ ລາວ ແມ່ນການຈັດຕັ້ງວິຊາຊີບການບັນຊີ ແລະ ກວດສອບຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດຈາກກະຊວງການເງິນ ແລະ ໄດ້ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ, ພ້ອມນັ້ນ ຕ້ອງໄດ້ຮັບອະນຸຍາດຈາກ ຄຄຊ ເສຍກ່ອນຈຶ່ງສາມາດດຳເນີນການໃຫ້ບໍລິການໃນຂົງເຂດວຽກງານຕະຫຼາດທຶນໄດ້.

ໂດຍພື້ນຖານແລ້ວ ໜ້າທີ່ຕົ້ນຕໍຂອງບໍລິສັດກວດສອບ ແມ່ນຊ່ວຍໃຫ້ບໍລິສັດລູກຄ້າສາມາດປະຕິບັດຕາມມາດຕະຖານສາກົນດ້ານການລາຍງານການເງິນ (International Financial Reporting Standard: IFRS) ແລະ ຢັ້ງຢືນຄວາມຖືກຕ້ອງຕໍ່ການກະກຽມ ແລະ ເປີດເຜີຍຂໍ້ມູນທາງການເງິນ ໂດຍສະເພາະແມ່ນເອກະສານລາຍງານການເງິນແຕ່ລະໄລຍະ.

ປະຈຸບັນໃນ ສປປ ລາວ ມີບໍລິສັດກວດສອບທີ່ໄດ້ຮັບການຮັບຮອງຈາກ ຄຄຊ ໃຫ້ດຳເນີນທຸລະກິດກ່ຽວກັບວຽກງານການກວດສອບດ້ານຫຼັກຊັບ ທັງໝົດ 4 ບໍລິສັດ ຄື: ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີສ໌ ຈຳກັດ, ບໍລິສັດ ເຄພີເອັມຈີລາວ ຈຳກັດ, ບໍລິສັດ ເອີນແອນຢັງ (ລາວ) ຈຳກັດ ແລະ ບໍລິສັດ ດີລອຍ ລາວ ຈຳກັດຜູ້ດຽວ.

## II. ສະພາບການພັດທະນາຕະຫຼາດທຶນ ໃນປີ 2015

### 1. ສະພາບລວມຂອງຕະຫຼາດທຶນ ຢູ່ ຕ່າງປະເທດ

ໃນປີ 2015 ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດແມ່ນມີຄວາມຜັນຜວນຫຼາຍ ຊຶ່ງສິ່ງຜົນເຮັດໃຫ້ດັດສະນີຕະຫຼາດຫຼັກຊັບຕ່າງປະເທດແຕ່ລະພາກພື້ນໃນທ້າຍປີ 2015 ມີການປັບຕົວຂຶ້ນລົງທີ່ແຕກຕ່າງກັນ ເມື່ອທຽບກັບທ້າຍປີ 2014 ເຊັ່ນ:

ດັດຊະນີຕະຫຼາດຫຼັກຊັບ ສ.ອາເມລິກາ ດັດຊະນີ Dow Jones ປັບຕົວຫຼຸດລົງ -2,63% ແລະ S&P500 -1,54%, ຍົກເວັ້ນ NASDAQ ທີ່ປັບຕົວເພີ່ມຂຶ້ນ 5,68%. ສາເຫດທີ່ພາໃຫ້ດັດຊະນີໃນຕະຫຼາດຫຼັກຊັບ ສ.ອາເມລິກາ ປັບຕົວຫຼຸດລົງ ເນື່ອງຈາກການເປີດເຜີຍຂໍ້ມູນການຈ້າງງານພາກເອກະຊົນໃນຊ່ວງກາງປີ ຕ່ຳກວ່າທີ່ນັກວິເຄາະຄາດການ, ລວມທັງຜູ້ລົງທຶນມີຄວາມກັງວົນຕໍ່ກັບການຂະຫຍາຍຕົວຂອງເສດຖະກິດໂລກ ໂດຍສະເພາະແມ່ນສະພາບເສດຖະກິດຂອງ ສ.ອາເມລິກາ.

ສໍາລັບດັດຊະນີຂອງຕະຫຼາດຫຼັກຊັບ ເອີຣົບ ແມ່ນມີການປັບຕົວເພີ່ມຂຶ້ນ ໂດຍສະເພາະແມ່ນ ເຢຍລະມັນ (DAX) ເພີ່ມຂຶ້ນເຖິງ 10,69%, ຝຣັ່ງ (CAC 40) ເພີ່ມຂຶ້ນ 7,05%, ຍົກເວັ້ນ ອັງກິດ (FTSE) ຫຼຸດລົງ -9,64%. ສາເຫດທີ່ພາໃຫ້ດັດຊະນີໃນຕະຫຼາດຫຼັກຊັບ ເອີຣົບ ປັບຕົວເພີ່ມຂຶ້ນ ເນື່ອງມາຈາກລາຍງານຕົວເລກເສດຖະກິດຂອງບັນດາປະເທດໃນກຸ່ມເອີຣົບມີທ່າອ່ຽງປັບຕົວດີຂຶ້ນໃນຊ່ວງໄຕມາດສຸດທ້າຍຂອງປີ 2015, ລວມທັງທະນາຄານກາງເອີຣົບ ຫຼື ECB ຍັງຄົງສືບຕໍ່ດໍາເນີນມາດຕະການກະຕຸ້ນເສດຖະກິດ.

ສ່ວນດັດຊະນີຂອງຕະຫຼາດຫຼັກຊັບ ອາຊີ ກໍ່ແມ່ນມີການປັບຕົວເພີ່ມຂຶ້ນ ເດັ່ນກວ່າໝູ່ແມ່ນ ສປ.ຈີນ (SHEN-ZHEN) ເພີ່ມຂຶ້ນເຖິງ 75,37% ແລະ ຊຽງໄຮ້ (SHANGHAI) ເພີ່ມຂຶ້ນ 48,51%, ຍີ່ປຸ່ນ (NIKKEI) ເພີ່ມຂຶ້ນ 10,1% ແລະ ສ.ເກົາຫຼີ (KOSPI) ເພີ່ມຂຶ້ນ 1,18%, ຍົກເວັ້ນ ໄຕ້ຫວັນ (TWSE) ຫຼຸດລົງ -8,76%, ຮ່ອງກົງ (HANGSENG) -6,67% ແລະ ອົດສະຕາລີ (S&P/ASX200) -3,4%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີປັບຕົວເພີ່ມຂຶ້ນ ແມ່ນເນື່ອງມາຈາກເສດຖະກິດຂອງປະເທດຍີ່ປຸ່ນໃນປີ 2015 ມີທ່າອ່ຽງທີ່ດີຂຶ້ນ, ພ້ອມນັ້ນທະນາຄານກາງຍີ່ປຸ່ນ ແລະ ທະນາຄານກາງ ສປ.ຈີນ ຍັງຄົງຈະສືບຕໍ່ດໍາເນີນນະໂຍບາຍເພື່ອກະຕຸ້ນເສດຖະກິດຂອງປະເທດ. ສໍາລັບດັດຊະນີຕະຫຼາດຫຼັກຊັບຂອງບັນດາປະເທດໃນກຸ່ມອາຊຽນ ຫຼາຍຕະຫຼາດແມ່ນໄດ້ປັບຕົວຫຼຸດລົງ ເຊັ່ນ: ໄທ (SET) ຫຼຸດລົງ -19,39%, ສິງກະໂປ (STRAIT TIMES) -14,18%, ອິນໂດເນເຊຍ (JCI) -12,43%, ມາເລເຊຍ (FBMLCI) -10,71%, ຟີລິບປິນ (PCOMP) -4,93% ແລະ ສສ.ຫວຽດນາມ (HANOI) ຫຼຸດລົງ -12,95%, (HOCHIMIN) -4,45% ອັນເນື່ອງມາຈາກ ຜູ້ລົງທຶນຍັງຄົງມີຄວາມກັງວົນຕໍ່ສະຖານະການຂອງເສດຖະກິດໂລກທີ່ຍັງຄົງມີທ່າອ່ຽງຫຼຸດລົງ.

## 2. ສະພາບລວມຂອງຕະຫຼາດທຶນ ຢູ່ ສປປ ລາວ

### 2.1 ການລະດົມທຶນດ້ວຍການອອກຈໍາໜ່າຍຫຼັກຊັບ

ໃນປີ 2015 ມີ 1 ບໍລິສັດ ຄື: ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ຮັບການອະນຸຍາດຈາກ ຄຄຊ ໃຫ້ອອກຈໍາໜ່າຍຮຸ້ນຄັ້ງທໍາອິດໃຫ້ແກ່ມວນຊົນ (Initial Public Offering: IPO) ແລະ 1 ບໍລິສັດ ຄື: ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ແມ່ນໄດ້ຮັບການອະນຸຍາດຈາກ ຄຄຊ ໃຫ້ອອກຈໍາໜ່າຍຮຸ້ນເພີ່ມທຶນ ຄື: ຂາຍໃຫ້ຜູ້ຖືຮຸ້ນເດີມ (Right Offering: RO) ແລະ ຂາຍໃຫ້ມວນຊົນ (Public Offering: PO).

ການອອກ IPO ຂອງ ສ.ວ.ນ ແມ່ນສາມາດລະດົມທຶນໄດ້ທັງໝົດ 77,5 ຕື້ກີບ (ຕາຕະລາງ 1). ຈຸດປະສົງການລະດົມທຶນຂອງ ສ.ວ.ນ ແມ່ນເພື່ອນໍາໃຊ້ເຂົ້າໃນການຂະຫຍາຍກິດຈະການ ເປັນຕົ້ນແມ່ນ ລົງທຶນໃສ່ການຂະຫຍາຍ 3 ສາຂາ ຄື: ສາຂາ 450 ປີ, ສາຂາປາກຊັນ ແລະ ສາຂາປາກເຊ.

**ຕາຕະລາງ 1: ສະຫຼຸບຜົນການລະດົມທຶນ ໂດຍຜ່ານ IPO ຂອງ ສ.ວ.ນ (ເດືອນ ພະຈິກ 2015)**

| ລຳດັບ | ປະເພດຂອງຜູ້ລົງທຶນ | ບັນຊີ | | ຮຸ້ນທີ່ຖືກຈອງ/ແບ່ງປັນ | |
|---|---|---|---|---|---|
| 1 | ຜູ້ລົງທຶນພາຍໃນ | ຈຳນວນ | ກວມ% | ຈຳນວນ | ກວມ% |
| 1.1 | ຜູ້ລົງທຶນປະເພດບຸກຄົນ | 187 | 90,34% | 18.295.700 | 73,18% |
| 1.2 | ຜູ້ລົງທຶນປະເພດສະຖາບັນ | - | - | - | - |
| ລວມ (1): | | 187 | 90,34% | 18.295.700 | 73,18% |
| 2 | ຜູ້ລົງທຶນຕ່າງປະເທດ | | | | |
| 2.1 | ຜູ້ລົງທຶນປະເພດບຸກຄົນ | 15 | 7,25% | 1.229.300 | 4,92% |
| 2.2 | ຜູ້ລົງທຶນປະເພດສະຖາບັນ | 5 | 2,42% | 5.475.000 | 21,90% |
| ລວມ (2): | | 20 | 9,66% | 6.704.300 | 26,82% |
| ລວມທັງໝົດ (1)+(2) | | 207 | 100% | 25.000.000 | 100% |

ຕະຫຼອດໄລຍະ 5 ປີຜ່ານມາ ໂດຍລວມແລ້ວ ບໍລິສັດສາມາດລະດົມທຶນຜ່ານຕະຫຼາດທຶນທັງໝົດເປັນຈຳນວນ 7.584,5 ຕື້ກີບ ດັ່ງແຜນວາດ 3 ລຸ່ມນີ້ ສະແດງໃຫ້ເຫັນວ່າ ມີແຕ່ປີ 2013 ເທົ່ານັ້ນ ທີ່ມີການລະດົມທຶນຜ່ານຕະຫຼາດທຶນໜ້ອຍທີ່ສຸດ ແຕ່ປີອື່ນໆແມ່ນສາມາດລະດົມໄດ້ຫຼາຍກວ່າ 1.237 ຕື້ກີບ ແລະ ເດັ່ນທີ່ສຸດແມ່ນປີ 2015 ເຊິ່ງສາມາດລະດົມທຶນໄດ້ເປັນຈຳນວນຫຼາຍກວ່າ 2.800 ຕື້ກີບ.

**ແຜນວາດ 3**: ມູນຄ່າການລະດົມທຶນໃນຕະຫຼາດທຶນ ສປປ ລາວ ຕັ້ງແຕ່ປີ 2011-2015

(ມູນຄ່າ: ຕື້ກີບ)




ສໍາລັບການອອກຈໍາໜ່າຍຮຸ້ນເພີ່ມທຶນ RO ແລະ PO ຂອງ ຜ-ຟຟລ ແມ່ນສາມາດລະດົມທຶນໄດ້ທັງໝົດ 2.754 ຕື້ກີບ, ຊຶ່ງມີໂຄງສ້າງຜູ່ຖືຮຸ້ນພາຍຫຼັງໄດ້ອອກຈໍາໜ່າຍຮຸ້ນເພີ່ມທຶນ ດັ່ງຕາຕະລາງ 2. ຈຸດປະສົງການລະດົມທຶນຂອງ ຜ-ຟຟລ ແມ່ນເພື່ອສ້າງເຂື່ອນຜະລິດໄຟຟ້າ, ຊື້ເຂື່ອນຜະລິດໄຟຟ້າຈາກລັດວິສາຫະກິດໄຟຟ້າລາວ ແລະ ບັນດາເຂື່ອນໂຄງການຜູ່ຜະລິດພະລັງງານອິດສະຫຼະ (Indepen- dent Power Producer: IPP).

**ຕາຕະລາງ 2**: ໂຄງສ້າງຜູ່ຖືຮຸ້ນພາຍຫຼັງອອກຈໍາໜ່າຍຮຸ້ນເພີ່ມທຶນ ຂອງ ຜ-ຟຟລ (ເດືອນ ກັນຍາ 2015)

| ເນື້ອໃນ | ຜູ່ຖືຮຸ້ນເດີມ (RO) | | ມວນຊົນທົ່ວໄປ (PO) | | ລວມທັງໝົດ | |
|---|---|---|---|---|---|---|
| | ຈໍານວນຮຸ້ນ | % ຂອງຮຸ້ນ RO | ຈໍານວນຮຸ້ນ | % ຂອງຮຸ້ນ PO | ຈໍານວນຮຸ້ນ | %ຂອງຮຸ້ນທັງໝົດ |
| **I. ຜູ່ລົງທຶນພາຍໃນ** | **357.862.126** | **87,55%** | **37.637.029** | **84,87%** | **395.499.155** | **87,29%** |
| - ບຸກຄົນ | 16.990.851 | 4,16% | 15.150 | 0,03% | 17.006.001 | 3,75% |
| - ສະຖາບັນ | 340.871.275 | 83,40% | 37.621.879 | 84,83% | 378.493.154 | 83,54% |
| **II. ຜູ່ລົງທຶນຕ່າງປະເທດ** | **50.876.796** | **12,45%** | **6.710.981** | **15,13%** | **57.587.777** | **12,71%** |
| - ບຸກຄົນ | 14.497.862 | 3,55% | 981 | 0,03% | 14.498.843 | 3,20% |
| - ສະຖາບັນ | 36.378.934 | 8,90% | 6.710.000 | 15,13% | 43.088.934 | 9,51% |
| **III. ລວມພາຍໃນ** | 357.862.126 | 87,55% | 37.637.029 | 84,87% | 395.499.155 | 87,29% |
| **IV. ລວມຕ່າງປະເທດ** | 50.876.796 | 12,45% | 6.710.981 | 15,13% | 57.587.777 | 12,71% |
| **V. ລວມທັງໝົດ** | **408.738.922** | **100,00%** | **44.348.010** | **100,00%** | **453.085.711** | **100,00%** |

## 2.2 ການເຄື່ອນໄຫວຂອງບໍລິສັດຈົດທະບຽນ

ຮອດປີ 2015 ບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ (ຕລຊລ) ມີ 5 ບໍລິສັດ ຄື: ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ), ບໍລິສັດ ລາວເວີນ ມະຫາຊົນ (ລວມຊ), ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ແລະ ບໍລິສັດ ສຸວັນນີໂຮມເຊັນເຕີ້ ມະຫາຊົນ (ສ.ວ.ນ). ໂດຍລວມແລ້ວ ໃນປີ 2015 ທັງ 5 ບໍລິສັດຈົດທະບຽນ ແມ່ນສາມາດສ້າງລາຍຮັບໄດ້ຫຼາຍລື່ນປີທີ່ຜ່ານມາ ແຕ່ວ່າກໍາໄລສຸດທິຂອງແຕ່ລະບໍລິສັດ ຊໍ້າພັດມີທ່າອ່ຽງຫຼຸດລົງເປັນສ່ວນຫຼາຍ ໂດຍສະເລ່ຍແລ້ວຫຼຸດລົງປະມານ 8,31%. ແຕ່ເຖິງຢ່າງໃດກໍ່ຕາມ ແຕ່ລະບໍລິສັດຈົດທະບຽນກໍ່ສາມາດຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນໄດ້ ດັ່ງ ຕາຕະລາງ 3 ຂ້າງລຸ່ມນີ້: ໃນໄລຍະຜ່ານມາທັງ 5 ບໍລິສັດ ກໍ່ໄດ້ມີການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ດັ່ງຕາຕະລາງ 3.

**ຕາຕະລາງ 3: ການຈ່າຍເງິນປັນຜົນຂອງ 5 ບໍລິສັດຈົດທະບຽນໃນ ຕລຊລ ແຕ່ປີ 2011 ຫາ 2015**

ຫົວໜ່ວຍ: ກີບ/ຮຸ້ນ

| ລໍາດັບ | | ທຄຕລ[1] | | | | | ຜ-ຟຟລ[2] | | | | |
|---|---|---|---|---|---|---|---|---|---|---|---|
| | | 2011 | 2012 | 2013 | 2014 | 2015 | 2011 | 2012 | 2013 | 2014 | 2015 |
| ງວດທີ 1 | ປັນຜົນຄັ້ງດຽວໃນປີ | | 436 | 405 | 360 | 173 | 177,97 | 170 | 182 | 182 | 110 |
| ງວດທີ 2 | | | 443 | 380 | 234 | 219 | 320 | 280 | 293 | 268 | 150 |
| ລວມ | | 776.58 | 879 | 785 | 594 | 392 | 497,97 | 450 | 475 | 450 | 460 |

| ລໍາດັບ | ລວມຊ[3] | | | ປທລ[4] | | ສ.ວ.ນ[5] |
|---|---|---|---|---|---|---|
| | 2013 | 2014 | 2015 | 2014 | 2015 | 2015 |
| ງວດທີ 1 | - | ບໍ່ມີປັນຜົນ | ບໍ່ມີປັນຜົນ | - | 45 | - |
| ງວດທີ 2 | ບໍ່ມີປັນຜົນ | 200 | 200 | 66 | 31 | 45 |
| ລວມ | - | 200 | 200 | 66 | 76 | 45 |

[1] ທຄຕລ ຈົດທະບຽນໃນ ຕລຊລ ໃນເດືອນ ມັງກອນ 2011.
[2] ຜ-ຟຟລ ຈົດທະບຽນໃນ ຕລຊລ ໃນເດືອນ ມັງກອນ 2011.
[3] ລວມຊ ຈົດທະບຽນໃນ ຕລຊລ ໃນເດືອນ ທັນວາ 2013.
[4] ປທລ ຈົດທະບຽນໃນ ຕລຊລ ໃນເດືອນ ທັນວາ 2014.
[5] ສ.ວ.ນ ຈົດທະບຽນໃນ ຕລຊລ ໃນເດືອນ ທັນວາ 2015.

## 2.3 ການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

ປີ 2015 ດັດຊະນີ ຕລຊລ ປິດຢູ່ທີ່ 1.173,63 ຈຸດ ຫຼຸດລົງ 240,56 ຈຸດ ຫຼືເທົ່າກັບ -17,01% ອັນເນື່ອງມາຈາກລາຄາຮຸ້ນຂອງ ທຄຕລ ປັບຫຼຸດລົງຕໍ່າກວ່າມູນຄ່າກຳນົດ (ແຜນວາດ 4), ມີມູນຄ່າການຊື້-ຂາຍທັງໝົດ 200,19 ຕື້ກີບ ເພີ່ມຂຶ້ນ 28,07% ແລະ ມີຈຳນວນຮຸ້ນຊື້-ຂາຍທັງໝົດ 31,25 ລ້ານຮຸ້ນ ເພີ່ມຂຶ້ນ 16,44% (ແຜນວາດ 5) ເມື່ອທຽບໃສ່ປີທີ່ຜ່ານມາ ໂດຍສະເລ່ຍມີມູນຄ່າການຊື້-ຂາຍ 810,52 ລ້ານກີບ/ມື້ ແລະ ມີຈຳນວນຮຸ້ນຊື້-ຂາຍ 126.558 ຮຸ້ນ/ມື້. ໃນປີ 2015 ຕລຊລ ມີມູນຄ່າຕະຫຼາດທັງໝົດ 12.047 ຕື້ກີບ ຫຼື ເທົ່າກັບ 12,67% ຂອງ ລວມຍອດຜະລິດຕະພັນພາຍໃນ (GDP) ປີ 2014 (ແຜນວາດ 6).

**ແຜນວາດ 4: ດັດຊະນີຕະຫຼາດຫຼັກຊັບລາວ 2011-2015**




**ແຜນວາດ 5: ມູນຄ່າການຊື້-ຂາຍ ແລະ ປະລິມານ**



**ແຜນວາດ 6: ມູນຄ່າຕະຫຼາດ ແຕ່ປີ 2011 – 2015**




<u>**ໝາຍເຫດ:**</u> ສຳລັບມູນຄ່າຕະຫຼາດຂອງປີ 2015 ແມ່ນທຽບໃສ່ລວມຍອດຜະລິດຕະພັນພາຍໃນ (GDP) ປີ 2014.

ຮຸ້ນຂອງ ທຄຕລ ມີລາຄາຊື້-ຂາຍສະເລ່ຍ 6.173 ກີບ ຫຼຸດລົງ 1.654 ກີບ. ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 7.500 ກີບ ແລະ ຕ່ຳສຸດ 4.900 ກີບ (ແຜນວາດ 7), ມີປະລິມານຊື້-ຂາຍທັງໝົດ 3,35 ລ້ານຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 20,73 ຕື້ກີບ ຫຼຸດລົງ 7,40% ເມື່ອທຽບໃສ່ປີ 2014 (ສະເລ່ຍ 83,96 ລ້ານກີບ/ມື້), ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 44,86% ຂອງມູນຄ່າການຊື້-ຂາຍທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 9,75%[6].

ຮຸ້ນຂອງ ຜ-ຟຟລ ມີລາຄາຊື້-ຂາຍສະເລ່ຍ 6.865 ກີບ ເພີ່ມຂຶ້ນ 253 ກີບ. ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 8.100 ກີບ ແລະ ຕ່ຳສຸດ 5.500 ກີບ (ແຜນວາດ 7), ມີປະລິມານຊື້-ຂາຍທັງໝົດ 23,94 ລ້ານຮຸ້ນ ແລະ ມີມູນຄ່າຊື້-ຂາຍ 164,36 ຕື້ກີບ ເພີ່ມຂຶ້ນ 71,79% ເມື່ອທຽບໃສ່ປີ 2014 (ສະເລ່ຍ 665,44 ລ້ານກີບ/ມື້). ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 58,70% ຂອງມູນຄ່າການຊື້-ຂາຍທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[7].

ຮຸ້ນຂອງ ລວມຊ ມີລາຄາຊື້-ຂາຍສະເລ່ຍ 7.956 ກີບ ຫຼຸດລົງ 1.896 ກີບ. ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 10.000 ກີບ ແລະ ຕ່ຳສຸດ 7.300 ກີບ (ແຜນວາດ 7), ມີປະລິມານຊື້-ຂາຍທັງໝົດ 42.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 335,72 ລ້ານກີບ (ສະເລ່ຍ 1,35 ລ້ານກີບ/ມື້). ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 39,30% ຂອງມູນຄ່າການຊື້-ຂາຍທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[8].

---

[6] ສັດສ່ວນຖືຄອງຮຸ້ນ ທຄຕລ ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[7] ສັດສ່ວນຖືຄອງຮຸ້ນ ຜ-ຟຟລ ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[8] ສັດສ່ວນຖືຄອງຮຸ້ນ ລວມຊ ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

ຮຸ້ນຂອງ ປທລ ມີລາຄາຊື້-ຂາຍສະເລ່ຍ 3.929 ກີບ ຫຼຸດລົງ 181 ກີບ. ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 4.200 ກີບ ແລະ ຕໍ່າສຸດ 2.550 ກີບ (ແຜນວາດ 7), ມີປະລິມານຊື້-ຂາຍທັງໝົດ 3,60 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 13,74 ຕື້ກີບ (ສະເລ່ຍ 57,28 ລ້ານກີບ/ມື້). ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 45,47% ຂອງມູນຄ່າການຊື້-ຂາຍທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[9].

ຮຸ້ນຂອງ ສ.ອ.ນ ໄດ້ເຂົ້າຊື້-ຂາຍໃນ ຕລຊລ ໃນວັນທີ 11 ທັນວາ 2015 ໂດຍມີລາຄາມື້ທຳອິດປິດຢູ່ທີ່ 3.300 ກີບ ສູງກວ່າລາຄາ IPO ຢູ່ 200 ກີບ ຫຼືເທົ່າກັບ 6,45%. ຮຸ້ນ ສ.ອ.ນ ມີລາຄາຊື້-ຂາຍສະເລ່ຍ 3.260 ກີບ ຕະຫຼອດປີ 2015 ມີລາຄາສູງສຸດຢູ່ທີ່ 3.300 ກີບ ແລະ ຕໍ່າສຸດ 3.250 ກີບ (ແຜນວາດ 7), ມີປະລິມານຊື້-ຂາຍທັງໝົດ 309.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1 ຕື້ກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 36,02% ຂອງມູນຄ່າການຊື້-ຂາຍທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,10%[10].

**ແຜນວາດ 7: ການເຄື່ອນໄຫວລາຄາຂອງຮຸ້ນ ທຄຕລ, ຜ-ຟຟລ, ລວມຊ, ປທລ ແລະ ສ.ອ.ນ**




ໃນທ້າຍປີ 2015 ຈຳນວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນໃນ ຕລຊລ ມີທັງໝົດ 12.076 ບັນຊີ ເພີ່ມຂຶ້ນ 668 ບັນຊີ ຫຼືເທົ່າກັບ 5,85% ເມື່ອທຽບໃສ່ປີທີ່ຜ່ານມາ.ໃນນັ້ນ ຈຳນວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນ ມີທັງໝົດ 9.650 ບັນຊີ (ຜູ້ລົງທຶນພາຍໃນປະເພດບຸກຄົນ 9.614 ບັນຊີ ແລະ ຜູ້ລົງທຶນພາຍໃນປະເພດສະຖາບັນ 36 ບັນຊີ) ຫຼື ກວມເອົາ 79,91% ແລະ ບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດມີທັງໝົດ 2.426 ບັນຊີ (ຜູ້ລົງທຶນຕ່າງປະເທດປະເພດບຸກຄົນ 2.360 ບັນຊີ ແລະ ຜູ້ລົງທຶນຕ່າງປະເທດປະເພດສະຖາບັນ 66 ບັນຊີ) ຫຼື ເທົ່າກັບ 20,09% (ແຜນວາດ 8). ເຖິງແມ່ນວ່າບັນຊີຊື້-ຂາຍຫຼັກຊັບຜູ້ລົງທຶນຕ່າງປະເທດກວມເອົາພຽງແຕ່ 20,09% ຂອງບັນຊີທັງໝົດກໍ່ຕາມ ແຕ່ມູນຄ່າການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ມີສູງເຖິງ 85% ຂອງມູນຄ່າການຊື້-ຂາຍທັງໝົດ (ແຜນວາດ 9).

---

[9] ສັດສ່ວນຖືຄອງຮຸ້ນ ປທລ ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[10] ສັດສ່ວນຖືຄອງຮຸ້ນ ສ.ອ.ນ ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ແຜນວາດ 8: ຈໍານວນບັນຊີຊື້-ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປະຈໍາປີ2015




ແຜນວາດ 9: ເປີເຊັນມູນຄ່າການຊື້-ຂາຍຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ປີ 2012-2015



### 2.3 ສະຖາບັນສື່ກາງດ້ານຫຼັກຊັບ

ປະຈຸບັນໃນ ສປປ ລາວ ບໍລິສັດຫຼັກຊັບທີ່ໄດ້ຮັບການອະນຸຍາດໃຫ້ເຄື່ອນໄຫວກ່ຽວກັບວຽກງານຕະຫຼາດທຶນ ຈາກ ຄຄຊ ມີທັງໝົດ 4 ບໍລິສັດ (ເອກະສານຊ້ອນທ້າຍ 1) ແລະ 1 ຫ້ອງການຜູ້ຕ່າງໜ້າ ໂນມູລະ ພັດທະນາສິນ ຈຳກັດ (ມະຫາຊົນ). ຜ່ານການລົງກວດກາ ແລະ ຕິດຕາມຢ່າງໃກ້ຊິດຂອງ ສຄຄຊ ໃນໄລຍະໜຶ່ງປີທີ່ຜ່ານມາ ເຫັນວ່າ ບໍລິສັດຫຼັກຊັບ ແລະ ບໍລິສັດກວດສອບ ແມ່ນມີການເຄື່ອນໄຫວທຸລະກິດຢູ່ໃນສະພາບປົກກະຕິ, ຮັກສາໄດ້ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຂົງເຂດວຽກງານຕະຫຼາດທຶນ.

ເພື່ອຕອບສະໜອງໃຫ້ແກ່ການຂະຫຍາຍຕົວຂອງວຽກງານຕະຫຼາດທຶນ, ໃນປີ 2015 ສຄຄຊ ໄດ້ຮັບຮອງເອົາ ບໍລິສັດກວດສອບໃຫ້ດຳເນີນທຸລະກິດກ່ຽວກັບວຽກງານການກວດສອບດ້ານຫຼັກຊັບ 1 ບໍລິສັດ ຄື: ບໍລິສັດ ດີລອຍ ລາວ ຈຳກັດຜູ້ດຽວ. ຕໍ່ອາຍຸບໍລິສັດກວດສອບໃນວຽກງານການກວດສອບດ້ານຫຼັກຊັບ 2 ບໍລິສັດ. ສະນັ້ນ ໃນປີ 2015 ມີບໍລິສັດກວດສອບທີ່ໄດ້ຮັບການຮັບຮອງຈາກ ຄຄຊ ໃຫ້ດຳເນີນທຸລະກິດກ່ຽວກັບວຽກງານການກວດສອບດ້ານຫຼັກຊັບ ທັງໝົດ 4 ບໍລິສັດ ຄື: ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີສ໌ ຈຳກັດ, ບໍລິສັດ ເຄພີເອັມຈີລາວ ຈຳກັດ, ບໍລິສັດ ເອີນ ແອນຢັງ (ລາວ) ຈຳກັດ ແລະ ບໍລິສັດ ດີລອຍ ລາວ ຈຳກັດຜູ້ດຽວ ແລະ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນຕ່າງປະເທດໃນການເຄື່ອນໄຫວວຽກງານຫຼັກຊັບ ສຄຄຊ ຍັງໄດ້ຮັບຮອງເອົາທະນາຄານດູແລຊັບສິນ 1 ແຫ່ງ ຄື: ທະນາຄານບາງກອກ ສາຂາ ນະຄອນຫຼວງວຽງຈັນ. ພ້ອມນັ້ນ ສຄຄຊ ຍັງໄດ້ອອກໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ 9 ຄົນ, ປ່ຽນປະເພດໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ 1 ຄົນ ແລະ ຮັບຮອງຜູ້ກວດສອບບັນຊີກ່ຽວກັບວຽກງານຫຼັກຊັບ 5 ຄົນ. ສະນັ້ນ ໃນປີ 2015 ມີນັກວິຊາຊີບທຸລະກິດຫຼັກຊັບທີ່ໄດ້ຜ່ານການຮັບຮອງຈາກ ສຄຄຊ ທັງໝົດ 15 ຄົນ ຫຼຸດລົງ 5 ຄົນ ທຽບໃສ່ປີ 2014, ໃນນີ້ມີ ນາຍໜ້າຊື້-ຂາຍຫຼັກຊັບ 7 ຄົນ, ລະຫັດຜູ້ຊ່ວຍນາຍໜ້າຊື້-ຂາຍຫຼັກຊັບຊົ່ວຄາວ 5 ຄົນ ແລະ ທີ່ປຶກສາທາງການເງິນ 2 ຄົນ, ນອກນັ້ນ ຍັງມີຜູ້ກວດສອບບັນຊີກ່ຽວກັບວຽກງານຫຼັກຊັບ 21 ຄົນ.

ມາຮອດປີ 2015 ເຫັນວ່າທັງ 4 ບໍລິສັດມີທຶນຈົດທະບຽນລວມກັນທັງໝົດ 305 ຕື້ກີບ ເມື່ອທຽບໃສ່ປີ 2014 ແມ່ນບໍ່ມີການປ່ຽນແປງ, ແຕ່ສຳລັບ ຊັບສິນທັງໝົດ ແລະ ຊັບສິນສຸດທິແມ່ນມີທ່າອ່ຽງຫຼຸດລົງ ຈຳນວນ 0.18% ແລະ 1,43% ຕາມລຳດັບ.

### 2.4 ການສ້າງ ແລະ ປັບປຸງນິຕິກຳ

- ນິຕິກຳກ່ຽວກັບການຄຸ້ມຄອງວຽກງານຕະຫຼາດທຶນ

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງຕະຫຼາດທຶນ ມີຄວາມເປັນລະບຽບຮຽບຮ້ອຍ, ມີປະສິດທິພາບ, ຍຸຕິທຳ, ໂປ່ງໃສ ແລະ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນປີ 2015 ສຄຄຊ ໄດ້ສຳເລັດການສ້າງນິຕິກຳໃໝ່ຈຳນວນ 3 ສະບັບ ຄື: “ລະບຽບວ່າດ້ວຍ ການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ”, “ລະບຽບວ່າດ້ວຍ ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ” ແລະ “ລະບຽບວ່າດ້ວຍ ບັນຊີຕາງໜ້າຊື້-ຂາຍຫຼັກຊັບ ໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ”. ນອກນັ້ນ ເພື່ອໃຫ້ແທດເໝາະກັບສະພາບການພັດທະນາຕະຫຼາດທຶນຂອງພວກເຮົາໃນແຕ່ລະໄລຍະ ສຄຄຊ ຍັງໄດ້ປັບປຸງນິຕິກຳຈຳນວນ 4 ສະບັບ ຄື: “ລະບຽບວ່າດ້ວຍ ການບັນຊີ ແລະ ການກວດສອບວຽກງານຫຼັກ

ຊັບ", "ລະບຽບວ່າດ້ວຍ ການອອກຈຳໜ່າຍຮຸ້ນ", "ລະບຽບວ່າດ້ວຍ ການຄຸ້ມຄອງຕະຫຼາດຫຼັກຊັບ" ແລະ "ລະບຽບວ່າດ້ວຍ ການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ". ປະຈຸບັນ ສຄຄຊ ໄດ້ປະກາດນຳໃຊ້ນິຕິກຳ ທັງໝົດ 29 ສະບັບ (ເອກະສານຊ້ອນທ້າຍ 2).

– ນິຕິກຳໃນການເຄື່ອນໄຫວຂອງຕະຫຼາດຫຼັກຊັບ

ເພື່ອເຮັດໃຫ້ ຕລຊລ ມີການເຄື່ອນໄຫວຢ່າງມີປະສິດທິພາບ ໃນປີ 2015 ຕລຊລ ໄດ້ສຳເລັດການສ້າງນິຕິກຳໃໝ່ຈຳນວນ 1 ສະບັບ ຄື: "ລະບຽບກ່ຽວກັບກອງທຶນຮ່ວມເພື່ອຊຳລະທົດແທນຄວາມສ່ຽງ" ແລະ ເພື່ອໃຫ້ແທດເໝາະກັບການພັດທະນາຕະຫຼາດຫຼັກຊັບໃນແຕ່ລະໄລຍະ ຕລຊລ ໄດ້ປັບປຸງນິຕິກຳຈຳນວນ 4 ສະບັບ ຄື: "ລະບຽບວ່າດ້ວຍການຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ", "ລະບຽບວ່າດ້ວຍການຈົດທະບຽນຮຸ້ນກູ້ໃນຕະຫຼາດຫຼັກຊັບລາວ", "ລະບຽບວ່າດ້ວຍສະມາຊິກກະພາບ" ແລະ "ລະບຽບວ່າດ້ວຍການສະສາງ ແລະ ຊຳລະໃນການແລກ ປ່ຽນຊື້-ຂາຍຫຼັກຊັບຢູ່ຕະຫຼາດຫຼັກຊັບລາວ". ປະຈຸບັນ ຕລຊລ ມີນິຕິກຳ ທັງໝົດ 10 ສະບັບ (ເອກະສານຊ້ອນທ້າຍ 3).

### 2.5 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່

ເພື່ອຊຸກຍູ້ໃຫ້ສັງຄົມມີຄວາມຮັບຮູ້, ເຂົ້າໃຈ ແລະ ມີສ່ວນຮ່ວມໃນການພັດທະນາຕະຫຼາດທຶນ, ສຄຄຊ ຈຶ່ງໄດ້ຈັດຕັ້ງການໂຄສະນາເຜີຍແຜ່ຄວາມຮູ້ດ້ານວຽກງານຕະຫຼາດທຶນໃຫ້ແກ່ມວນຊົນດ້ວຍຫຼາຍຮູບການ ແລະ ຫຼາຍຊ່ອງທາງ ເປັນຕົ້ນແມ່ນ ການເຜີຍແຜ່ຜ່ານພາຫະນະສື່ມວນຊົນປະເພດຕ່າງໆ ເຊັ່ນ: ວາລະສານການທະນາຄານ, ໜັງສືພິມລາວພັດທະນາ ແລະ ໂທລະພາບແຫ່ງຊາດລາວ ຊ່ອງ 1 ແລະ ຊ່ອງ 3, ເວັບໄຊ໌ ຄຄຊ ແລະ ຄື້ນວິທະຍຸ 99,7 MHz ຂອງ ທະນາຄານ ແຫ່ງ ສປປ ລາວ. ນອກນັ້ນ, ສຄຄຊ ຍັງໄດ້ລົງໂຄສະນາເຜີຍແຜ່ກັບທີ່ ໃນຫົວຂໍ້ "ການລົງທຶນຢ່າງມີອາຊີບກັບຮຸ້ນ" ຢູ່ບັນດາສະຖາບັນການສຶກສາ ແລະ ອົງການຕ່າງໆ ພາຍໃນນະຄອນຫຼວງວຽງຈັນ ທັງໝົດ ຈຳນວນ 19 ຄັ້ງ/ປີ, ມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 3.616 ຄົນ ແລະ ໄດ້ສົມທົບກັບຕະຫຼາດຫຼັກຊັບລາວ ແລະ ບໍລິສັດ ເອພີເອັມ ລາວ ຈຳກັດ ຈັດຝຶກອົບຮົມ ຢູ່ຕ່າງແຂວງ ໃນຫົວຂໍ້ "ການກະກຽມຄວາມພ້ອມເພື່ອລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ" ຈຳນວນ 5 ແຂວງ ມີຜູ້ເຂົ້າຮ່ວມທັງໝົດ 328 ຄົນ. ພ້ອມນັ້ນ, ໃນວັນທີ 14 ກໍລະກົດ 2015 ສຄຄຊ ຍັງໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຮ່ວມກັບ ໂທລະພາບແຫ່ງຊາດລາວ ກ່ຽວກັບການສ້າງລາຍການໂທລະພາບ "ເສັ້ນທາງສູ່ຕະຫຼາດທຶນລາວ".

### 2.6 ການຮ່ວມມືສາກົນ

ສຄຄຊ ໄດ້ເສີມຂະຫຍາຍການພົວພັນຮ່ວມມືກັບສາກົນ ພາຍໃຕ້ຮູບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ເປັນຕົ້ນແມ່ນ ການຮ່ວມມືກັບ ຄຄຊ ສສ.ຫວຽດນາມ, ສປ.ຈີນ, ໄທ, ຕະຫຼາດຫຼັກຊັບ ສ.ເກົາຫຼີ ແລະ ກະຊວງຍຸຕິທຳ ສ.ເກົາຫຼີ ເພື່ອຈັດກອງປະຊຸມໃນຫົວຂໍ້ຕ່າງໆ ທີ່ຕິດພັນກັບວຽກງານຕະຫຼາດທຶນ ໃຫ້ແກ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ພາກສ່ວນກ່ຽວຂ້ອງ ແລະ ເປັນເຈົ້າພາບຈັດກອງປະຊຸມ ຄຄຊ 5 ປະເທດເຂດອ່າງແມ່ນ້ຳຂອງ (MCMC) ຄັ້ງທີ 5. ພ້ອມນັ້ນ ກໍ່ໄດ້ພົບປະ ແລະ ປຶກສາຫາລືຮ່ວມກັບຄະນະຊ່ຽວຊານຈາກອົງການ OECD ເພື່ອກະກຽມເປັນເຈົ້າພາບຈັດກອງປະຊຸມ OECD Southeast Asia Corporate Governance Initiative ຄັ້ງທີ III ຢູ່ ສປປ ລາວ ໃນປີ 2016, ຈັດກອງປະຊຸມປຶກສາຫາລື ລະຫວ່າງ ຄະນະຊີ້ນຳລວມ ແລະ ຄະນະອານຸກຳມະການຊ່ວຍວຽກໃນ

ການກະກຽມເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ແລະ ເຂົ້າຮ່ວມກອງປະຊຸມອື່ນໆຂອງອາຊຽນ ແລະ ອົງການຈັດຕັ້ງສາກົນຕ່າງໆ ທີ່ຕິດພັນກັບວຽກງານຕະຫຼາດທຶນ.

## III. ທິດທາງແຜນການປີ 2016

ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດພັດທະນາຕະຫຼາດທຶນ2016-2020 ສາມາດບັນລຸໄດ້ຕາມເປົ້າໝາຍ, ສຄຄຊ ຈະໄດ້ເລັ່ງໃສ່ໜ້າວຽກຕົ້ນຕໍດັ່ງນີ້:

- **ທາງດ້ານນິຕິກຳ**: ສ້າງ ແລະ ປັບປຸງ ບັນດານິຕິກຳທີ່ຈຳເປັນຕໍ່ການເຄື່ອນໄຫວວຽກງານຕະຫຼາດທຶນ ໃຫ້ມີປະສິດທິພາບ, ທັນເຂົ້າສູ່ມາດຕະຖານສາກົນເທື່ອລະກ້າວ ແລະ ສາມາດແກ້ໄຂຂໍ້ບົກຜ່ອງດ້ານຕ່າງໆໄດ້. ສຶກສາຄົ້ນຄວ້າກົນໄກການສືບສວນ-ສອບສວນ, ການແກ້ໄຂຂໍ້ຂັດແຍ່ງວຽກງານຫຼັກຊັບ ແລະ ການດຳເນີນຄະດີ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງເປັນຮູບແບບການສືບສວນ-ສອບສວນ ແລະ ແກ້ໄຂຂໍ້ຂັດແຍ່ງວຽກງານຫຼັກຊັບ ຂອງ ສປປ ລາວ; ຄົ້ນຄວ້າ ແລະ ປັບປຸງຊ່ອງທາງຮັບຄຳສະເໜີຈາກສັງຄົມກ່ຽວກັບວຽກງານຫຼັກຊັບ ແລະ ກົນໄກການຮັບຄຳຮ້ອງຂໍ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງໃນຂົງເຂດວຽກງານຫຼັກຊັບແນໃສ່ເຮັດໃຫ້ມີບ່ອນອີງທີ່ໜັກແໜ້ນເພື່ອຄຸ້ມຄອງຕະຫຼາດທຶນ;
- **ສະຖາບັນສື່ກາງດ້ານຫຼັກຊັບ**: ຊຸກຍູ້ບໍລິສັດຫຼັກຊັບໃຫ້ເຄື່ອນໄຫວຕາມພາລະບົດບາດໂດຍສະເພາະແມ່ນຂອດການຊອກຫາເປົ້າໝາຍບໍລິສັດຈົດທະບຽນ; ຊຸກຍູ້ບໍລິສັດຕ່າງປະເທດເຄື່ອນໄຫວທຸລະກິດການຈັດລຳດັບຄວາມໜ້າເຊື່ອຖື ແລະ ການປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງເຄື່ອນໄຫວໃນຂົງເຂດວຽກງານຕະຫຼາດທຶນມາຂຶ້ນທະບຽນຢູ່ ສປປ ລາວ ເພື່ອເຮັດໃຫ້ຂັ້ນຕອນໃນການອອກຈຳໜ່າຍພັນທະບັດລັດຖະບານ ແລະ ຮຸ້ນກູ້ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ເຄື່ອງມືທາງການເງິນອື່ນໆໃຫ້ສົມບູນຂຶ້ນ; ເອົາໃຈໃສ່ຄຸ້ມຄອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນເຄື່ອນໄຫວພາຍໃຕ້ລະບຽບກົດໝາຍ ແນໃສ່ຮັບປະກັນສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນ;
- **ການເຄື່ອນໄຫວຂອງບໍລິສັດຈົດທະບຽນ**: ລົງເລິກຊຸກຍູ້ບໍລິສັດຈົດທະບຽນ ດ້ວຍການກະກຽມຄວາມພ້ອມບໍລິສັດທີ່ເຫັນວ່າ ມີເງື່ອນໄຂຈົດທະບຽນ; ສົ່ງເສີມໃຫ້ມີຄວາມໂປ່ງໃສ່ໃນການເປີດເຜີຍຂໍ້ມູນຂອງບໍລິສັດຈົດທະບຽນດ້ວຍການສືບຕໍ່ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດການນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ (International Financial Reporting Standards: IFRS) ຂອງບໍລິສັດຈົດທະບຽນ;
- **ການເຄື່ອນໄຫວຕະຫຼາດຂັ້ນສອງ**: ສົ່ງເສີມໃຫ້ມູນຄ່າການຊື້-ຂາຍ ແລະ ສະພາບຄ່ອງ ຫຼາຍຂຶ້ນ ໂດຍຊຸກຍູ້ໃຫ້ ຕລຊລ ເປີດບໍລິການຊື້-ຂາຍຮຸ້ນແບບຈຳນວນຫຼາຍ (Block Trading), ຊຸກຍູ້ການພັດທະນາຜະລິດຕະພັນຫຼັກຊັບໃຫ້ຫຼາກຫຼາຍເພື່ອຕອບສະໜອງໃຫ້ແກ່ຄວາມຕ້ອງການລະດົມທຶນໃນສັງຄົມ ແລະ ເພີ່ມທາງເລືອກໃນການລົງທຶນ, ສຸມໃສ່ການຄົ້ນຄວ້າ ແລະ ກຳນົດນະໂຍບາຍກ່ຽວກັບການຄຸ້ມຄອງ, ຊຸກຍູ້ສົ່ງເສີມ ແລະ ຂະຫຍາຍຖານຜູ້ລົງທຶນໃນຕະຫຼາດທຶນລາວ. ຊຸກຍູ້ໃຫ້ ຕລຊລ ກະກຽມຄວາມພ້ອມໃນການເຂົ້າເປັນສະມາຊິກ (Partnership) ຂອງອົງການ ANNA ເພື່ອເຮັດໃຫ້ສາກົນຮັບຮູ້ບັນດາຜະລິດຕະພັນໃນ ຕລຊລ ແລະ ຕັດສິນໃຈມາລົງທຶນໃນຕະຫຼາດທຶນລາວ;

- **ການໂຄສະນາເຜີຍແຜ່**: ເພື່ອເຮັດໃຫ້ມວນຊົນໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ວຽກງານຕະຫຼາດທຶນໃນ ສປປ ລາວ, ສໍານັກງານ ຄຄຊ ຈະສືບຕໍ່ຈັດກອງປະຊຸມສໍາມະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ ບັນດາສະຖາບັນການສຶກສາ, ອົງການຈັດຕັ້ງພາກລັດ, ເອກະຊົນ ແລະ ປະຊາຊົນທົ່ວໄປໃຫ້ທົ່ວເຖິງ, ພ້ອມທັງ ຈັດຕັ້ງການໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນຜ່ານສື່ສິ່ງພິມ ແລະ ສື່ມວນຊົນຕ່າງໆໃຫ້ກວ້າງຂວາງເພື່ອໃຫ້ມີຄວາມຫຼາກຫຼາຍໃນການກະຈາຍຂໍ້ມູນ ແລະ ຄວາມຮູ້. ນອກຈາກນີ້, ຍັງສືບຕໍ່ສົມທົບກັບໂທລະພາບແຫ່ງຊາດລາວສ້າງລາຍການໂທລະພາບ “ເສັ້ນທາງສູ່ຕະຫຼາດທຶນລາວ” ໃຫ້ສາມາດອອກອາກາດເຜີຍແຜ່ສູ່ມວນຊົນໄດ້ຮັບຊົມ; ສືບຕໍ່ຄົ້ນຄວ້າການສ້າງຕັ້ງສູນໃຫ້ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ເພື່ອພັດທະນາບຸກຄະລາກອນເຂົ້າມາຮັບໃຊ້ ແລະ ພັດທະນາວຽກງານຕະຫຼາດທຶນລາວໃນອານາຄົດ;
- **ການຮ່ວມມືສາກົນ**: ສືບຕໍ່ຈັດຕັ້ງປະຕິບັດແຜນການຮ່ວມມືກັບ ຄຄຊ ສສ.ຫວຽດນາມ, ສປ.ຈີນ, ໄທ ແລະ ຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການຈາກອົງການຈັດຕັ້ງສາກົນອື່ນໆ; ສືບຕໍ່ຄົ້ນຄວ້າບັນດາໂຄງການເຊື່ອມໂຍງຕະຫຼາດທຶນອາຊຽນ, ກະກຽມເງື່ອນໄຂສະໝັກເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (International Organization of Securities Commissions: IOSCO); ກະກຽມເປັນເຈົ້າພາບຈັດກອງປະຊຸມ OECD Southeast Asia Corporate Governance Initiative ຄັ້ງທີ III ຢູ່ ສປປ ລາວ.

## ເອກະສານຊ້ອນທ້າຍ 1 : ບໍລິສັດຫຼັກຊັບໃນ ສປປ ລາວ

| ລ/ດ | ຊື່ | ວັນສ້າງຕັ້ງ | ໂຄງສ້າງການຖືຮຸ້ນ | ຈຳນວນ ໜ່ວຍບໍລິການ | ຂອບເຂດການເຄື່ອນໄຫວ |
|---|---|---|---|---|---|
| 1 | ບໍລິສັດຫຼັກຊັບ ລ້ານຊ້າງມະຫາຊົນ | 01 ທັນວາ 2010 | ທະນາຄານພັດທະນາລາວ 100% | - | ເຕັມຮູບແບບ: ທີ່ປຶກສາດ້ານການເງິນ, ເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ຄໍ້າປະກັນການຈຳໜ່າຍຫຼັກຊັບ |
| 2 | ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ | 20 ທັນວາ 2010 | - ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 70%<br>- ບໍລິສັດຫຼັກຊັບ ເຄທີຊີມິໂກ (ປະເທດ ໄທ) 30% | 2 | ເຕັມຮູບແບບ: ທີ່ປຶກສາດ້ານການເງິນ, ເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ຄໍ້າປະກັນການຈຳໜ່າຍຫຼັກຊັບ |
| 3 | ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ | 16 ພະຈິກ 2013 | - ທະນາຄານສົ່ງເສີມກະສິກຳ 41%<br>- ບໍລິສັດຫຼັກຊັບ ປາຊີຟິກຮຸ້ນສ່ວນ ຈຳກັດ (ສປ ຈີນ) 39%<br>- ບໍລິສັດ ອຸດສາຫະກຳຂໍ້ມູນຂ່າວສານລາວ ຈຳກັດ 20% | - | ເຕັມຮູບແບບ: ທີ່ປຶກສາດ້ານການເງິນ, ເປັນນາຍໜ້າຊື້-ຂາຍຫຼັກຊັບ ແລະ ຄໍ້າປະກັນການຈຳໜ່າຍຫຼັກຊັບ |
| 4 | ບໍລິສັດຫຼັກຊັບ ເອພີເອັມ ລາວ ຈຳກັດ | 16 ພະຈິກ 2013 | - ບໍລິສັດຫຼັກຊັບ Asset Pro Management Co., Ltd (ປະເທດໄທ) 60%<br>- ບຸກຄົນຕ່າງປະເທດ (ໄທ) 20%<br>- ບຸກຄົນພາຍໃນປະເທດ 20% | - | ເປັນທີ່ປຶກສາທາງດ້ານການເງິນ |

**ເອກະສານຊ້ອຍທ້າຍ 2: ນິຕິກຳທັງໝົດຂອງ ສຄຄຊ (ຮອດປີ 2015)**

1) "ກົດໝາຍວ່າດ້ວຍຫຼັກຊັບ" ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
2) "ບົດແນະນຳວ່າດ້ວຍລະຫັດຫຼັກຊັບ" ສະບັບເລກທີ 112/ສຄລຕ, ລົງວັນທີ 7 ກຸມພາ 2011;
3) "ຂໍ້ຕົກລົງວ່າດ້ວຍລະບຽບການເປີດເຜີຍຂໍ້ມູນ" ສະບັບເລກທີ 014/ຄລຕ, ລົງວັນທີ 19 ພຶດສະພາ 2011;
4) "ແຈ້ງການກ່ຽວກັບການສ້າງ, ພັດທະນາ ແລະ ນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຂອງບໍລິສັດຫຼັກຊັບ" ສະບັບເລກທີ 371/ສຄລຕ, ລົງວັນທີ 24 ກຸມພາ 2012;
5) "ລະບຽບວ່າດ້ວຍການລາຍງານ" ສະບັບເລກທີ 373/ສຄລຕ, ລົງວັນທີ 24 ກຸມພາ 2012;
6) "ຄູ່ມືກ່ຽວກັບການຂໍອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ" ສະບັບເລກທີ 482/ສຄລຕ, ລົງວັນທີ 27 ກຸມພາ 2012;
7) "ລະບຽບວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນທາງອິນເຕີເນັດ ຢູ່ ສປປ ລາວ" ສະບັບເລກທີ 001/ ຄຄຊ, ລົງວັນທີ 24 ກໍລະກົດ 2013;
8) "ລະບຽບວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ" ສະບັບເລກທີ 002/ຄຄຊ, ລົງວັນທີ 24 ກໍລະກົດ 2013;
9) "ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ" ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
10) "ລະບຽບວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ" ສະບັບເລກທີ 006/ຄຄຊ, ລົງວັນທີ 20 ກັນຍາ 2013;
11) "ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ" ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
12) "ແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ເລື່ອງການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS)" ສະບັບເລກທີ 014/ຄຄຊ, ລົງວັນທີ 25 ທັນວາ 2013;
13) "ແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ເລື່ອງການລະດົມທຶນໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ" ສະບັບເລກທີ 001/ຄຄຊ, ລົງວັນທີ 14 ກຸມພາ 2014;
14) "ລະບຽບວ່າດ້ວຍການກວດກາວຽກງານຫຼັກຊັບ" ສະບັບເລກທີ 002/ຄຄຊ, ລົງວັນທີ 18 ກຸມພາ 2014;
15) "ລະບຽບວ່າດ້ວຍຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ" ສະບັບເລກທີ 003/ຄຄຊ, ລົງວັນທີ 18 ກຸມພາ 2014;
16) "ລະບຽບວ່າດ້ວຍການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ" ສະບັບເລກທີ 004/ຄຄຊ, ລົງວັນທີ 18 ກຸມພາ 2014;
17) "ບົດແນະນຳວ່າດ້ວຍການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ" ສະບັບເລກທີ 257/ສຄຄຊ, ລົງວັນທີ 3 ມີນາ 2014;

18) "ບົດແນະນຳວ່າດ້ວຍ ການຈັດຕັ້ງປະຕິບັດລະບຽບວ່າດ້ວຍ ຄວາມ ພຽງພໍຂອງທຶນຂອງບໍລິສັດຫຼັກຊັບ" ສະບັບເລກທີ 281/ສຄຄຊ, ລົງວັນທີ 6 ມິນາ 2014;

19) "ລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ" ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014;

20) "ລະບຽບວ່າດ້ວຍທະນາຄານດູແລຊັບສິນ" ສະບັບເລກທີ 010/ຄຄຊ, ລົງວັນທີ 7 ພຶດສະພາ 2014;

21) "ຂໍ້ຕົກລົງວ່າດ້ວຍຄ່າທຳນຽມສຳລັບການອອກຈຳໜ່າຍຮຸ້ນກູ້ຢູ່ ຕ່າງປະເທດ" ສະບັບເລກທີ 011/ຄຄຊ, ລົງວັນທີ 7 ພຶດສະພາ 2014;

22) "ລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້" ສະບັບເລກທີ 019/ຄຄຊ, ລົງວັນທີ 22 ທັນວາ 2014;

23) "ລະບຽບວ່າດ້ວຍການບັນຊີ ແລະ ການກວດສອບວຽກງານຫຼັກຊັບ" ສະບັບເລກທີ 001/ຄຄຊ, ລົງວັນທີ 07 ເມສາ 2015;

24) "ລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນ" ສະບັບເລກທີ 018/ຄຄຊ, ລົງວັນທີ 27 ກໍລະກົດ 2015;

25) "ລະບຽບວ່າດ້ວຍການຄຸ້ມຄອງຕະຫຼາດຫຼັກຊັບ" ສະບັບເລກທີ 019/ຄຄຊ, ລົງວັນທີ 27 ກໍລະກົດ 2015;

26) "ລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ" ສະບັບເລກທີ 002/ຄຄຊ, ລົງວັນທີ 08 ທັນວາ 2015;

27) "ລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ" ສະບັບເລກທີ 003/ຄຄຊ, ລົງວັນທີ 08 ທັນວາ 2015;

28) "ລະບຽບວ່າດ້ວຍບັນຊີຕາງໜ້າຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢູ່ ສປປ ລາວ" ສະບັບເລກທີ 004/ຄຄຊ, ລົງວັນທີ 08 ທັນວາ 2015;

29) "ລະບຽບວ່າດ້ວຍການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ'' ສະບັບເລກທີ 005/ຄຄຊ, ລົງວັນທີ 08 ທັນວາ 2015;

**ເອກະສານຊ້ອນທ້າຍ 3: ນິຕິກຳທັງໝົດຂອງ ຕລຊລ (ຮອດ ປີ 2015)**

1) "ລະບຽບວ່າດ້ວຍການຕິດຕາມຕະຫຼາດ" ສະບັບເລກທີ 20/ຕລຊລ, ລົງວັນທີ 07 ມັງກອນ 2011;
2) "ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ" ສະບັບເລກທີ 22/ຕລຊລ, ລົງວັນທີ 07 ມັງກອນ 2011;
3) "ລະບຽບວ່າດ້ວຍການຮັບຝາກຫຼັກຊັບ" ສະບັບເລກທີ 26/ຕລຊລ, ລົງວັນທີ 07 ມັງກອນ 2011;
4) "ລະບຽບວ່າດ້ວຍຕົວແທນການໂອນຫຼັກຊັບ" ສະບັບເລກທີ 27/ຕລຊລ, ລົງວັນທີ 07 ມັງກອນ 2011;
5) "ລະບຽບກ່ຽວກັບກອງທຶນຮ່ວມເພື່ອຊຳລະທົດແທນຄວາມສ່ຽງ" ສະບັບເລກທີ 01/ຕລຊລ, ລົງວັນທີ 17 ກໍລະກົດ 2013;
6) "ລະບຽບວ່າດ້ວຍສະມາຊິກກະພາບຂອງຕະຫຼາດຫຼັກຊັບລາວ" ສະບັບເລກທີ 02/ຕລຊລ, ລົງວັນທີ 03 ທັນວາ 2014;
7) "ລະບຽບວ່າດ້ວຍການສະສາງ ແລະ ຊຳລະໃນການ ຊື້-ຂາຍຫຼັກຊັບຢູ່ຕະຫຼາດຫຼັກຊັບລາວ" ສະບັບເລກທີ 27/ຕລຊລ, ລົງວັນທີ 04 ທັນວາ 2014;
8) "ລະບຽບວ່າດ້ວຍການຈົດທະບຽນຮຸ້ນ" ສະບັບເລກທີ 05/ຕລຊລ, ລົງວັນທີ 26 ພະຈິກ 2015;
9) "ລະບຽບວ່າດ້ວຍການຈົດທະບຽນຮຸ້ນກູ້" ສະບັບເລກທີ 06/ຕລຊລ, ລົງວັນທີ 26 ພະຈິກ 2015;
10) "ລະບຽບວ່າດ້ວຍການດຳເນີນງານຕະຫຼາດ" ສະບັບເລກທີ 07/ຕລຊລ, ລົງວັນທີ 11 ທັນວາ 2015.